(1)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ — ເລກທີ 311 /ອຄ.ກອກ.

ກົມອຸດສາຫະກຳ — ນະຄອນຫຼວງວຽງຈັນ, ວັນທີ 14.05.2007

# ແຈ້ງການ

***ເຖິງ:*** ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ.

***ເລື່ອງ:*** ວ່າດ້ວຍການອອກອະນຸຍາດດຳເນີນກິດຈະການໂຮງງານ ອຸດສາຫະກຳປຸງແຕ່ງໄມ້.

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ່ 01/99/ສພຊ, ລົງວັນທີ່ 3/4/1999.
- ອີງຕາມຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ເລກທີ່ 0221/ອຄ, ລົງວັນທີ່ 13/02/2007, ແຈ້ງການ ເລກທີ່ 108/ອຄ.ອກ, ລົງວັນທີ່ 17/2/07 ແລະ ບົດແນະນຳ ເລກທີ່ 133/ອຄ.ອກ, ລົງວັນທີ່ 1/3/07.
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມອຸດສາຫະກຳ ເລກທີ່ 1442/ອຄ.ຈພງ, ລົງວັນທີ່ 16/10/2006.
- ອີງຕາມທິດຊີ້ນຳ ຂອງທ່ານລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ.

ເພື່ອເປັນການສືບຕໍ່ ດັດສົມຄຸ້ມຄອງ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມຜົນຂອງການກວດກາ, ດັດສົມ ແລະ ຂັດຈ້ອນໂຮງງານ ຕາມຂໍ້ຕົກລົງເລກທີ່ 0221/ອຄ, ລົງວັນທີ່ 13/2/07; ເພື່ອແນໃສ່ ຊຸກຍູ້ສົ່ງເສີມ ໃຫ້ຜູ້ປະກອບການໂຮງງານອຸດສາຫະກຳປຸງແຕ່ງໄມ້ ໄດ້ເຄື່ອນໄຫວກິດຈະການໂຮງງານຖືກຕ້ອງ ຕາມລະບຽບການ, ມີປະສິດທິຜົນດີ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ; ກົມອຸດສາຫະກຳ ອອກແຈ້ງການໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ປະຕິບັດດັ່ງນີ້:

1. ໃຫ້ສະຫຼຸບ ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກການກວດກາ ແລະ ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຢູ່ພາຍໃນແຂວງຂອງຕົນ ໃຫ້ລະບຸແຈ້ງຄື: ກ່ອນການກວດກາ ແລະ ດັດສົມທັງໝົດມີຈັກໂຮງງານ? (ແຍກຕາມປະເພດ I, II, III); ພາຍຫຼັງການກວດກາ ແລະ ດັດສົມແລ້ວ ມີຈັກໂຮງງານໄດ້ຕາມມາດຕະຖານ, ມີຈັກໂຮງງານຕ້ອງປັບປຸງ ແລະ ມີຈັກໂຮງງານຕ້ອງຢຸດເຊົາ. ພ້ອມທັງຂັດຕິດບົດບັນທຶກການກວດກາຂອງທຸກໆໂຮງງານ ແລ້ວສົ່ງມາຍັງກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນວັນທີ່ 25/5/07 (ສຳລັບແຂວງທີ່ຍັງບໍ່ທັນສຳເລັດການກວດກາ ແລະ ດັດສົມໂຮງງານ ຕາມແຈ້ງການຂອງກົມອຸດສາຫະກຳ ເລກທີ່ 108/ອຄ.ອກ, ລົງວັນທີ່ 17/2/07).

2. ມອບໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກປະເພດ ແລະ ທຸກລະດັບ ຄືນ

ໃໝ່ ສຳລັບໂຮງງານທີ່ມີມາດຕະຖານຄົບຖ້ວນ ແລະ ຖືກຕ້ອງ ຕາມຂໍ້ຕົກລົງເລກທີ 0221/ອຄ, ລົງວັນທີ 13/2/07 ທີ່ໄດ້ຜ່ານການ ກວດກາ ແລະ ຄັດສົນໂຮງງານແລ້ວ ຄືດັ່ງນີ້:

- ໃຫ້ແນະນຳໂຮງງານທີ່ມີມາດຕະຖານຄົບຖ້ວນ, ທີ່ມີເງື່ອນໄຂສືບຕໍ່ດຳເນີນກິດຈະການໂຮງງານ, ໃຫ້ປະກອບເອກະສານຕາມລະບຽບການໃຫ້ຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານໃຫ້ ໂດຍປະຕິບັດຕາມຂັ້ນຕອນການອະນຸຍາດ ທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍໂຮງງານ ເລກທີ່ 103/ອຫ, ລົງວັນທີ່ 21/2/92. ໃນນີ້, ຜະລິດຕະພັນທີ່ໂຮງງານຜະລິດໄດ້ໃຫ້ຈັດເຂົ້າໃນລະຫັດ ໃຫ້ຈະແຈ້ງ ແລະ ຖືກຕ້ອງ ຕາມບົດແນະນຳ ເລກທີ 133/ອຄ.ອກ, ລົງວັນທີ່ 1/3/07; ພ້ອມດຽວກັນນີ້ ໃຫ້ໂຮງງານເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕາມຂໍ້ຕົກລົງຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1222/ອຫ, ລົງວັນທີ່ 7/12/05.
- ໃຫ້ເຮັດໜັງສືສັນຍາກັນລະຫວ່າງ ພະແນກ ອ.ຄ ກັບໂຮງງານທີ່ຍັງບໍ່ທັນມີມາດຕະຖານຄົບຖ້ວນ, ທີ່ສະເໜີໃຫ້ປັບປຸງໂຮງງານ ໂດຍມີແຜນການປັບປຸງ, ມາດຕະການ ແລະ ກຳນົດເວລາປະຕິບັດໃຫ້ຈະແຈ້ງ ຊຶ່ງເລີ່ມແຕ່ມື້ປະກາດໃຊ້ຂໍ້ຕົກລົງເລກທີ່ 0221/ອຄ ເປັນຕົ້ນມາ. ພາຍຫຼັງທີ່ໂຮງງານໄດ້ປັບປຸງຄືນມີມາດຕະຖານຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ໃຫ້ປະຕິບັດຂັ້ນຕອນການຂໍອະນຸຍາດ ຕາມທີ່ລະບຸໄວ້ຂ້າງເທິງນີ້. ໃນໄລຍະການປັບປຸງໂຮງງານ ບໍ່ອະນຸຍາດໃຫ້ໂຮງງານດຳເນີນກິດຈະການ ຈົນກວ່າຈະປັບປຸງໂຮງງານສຳເລັດ ແລະ ໄດ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ.
- ສຳລັບໂຮງງານທີ່ບໍ່ມີມາດຕະຖານ ແລະ ເງື່ອນໄຂ ສືບຕໍ່ດຳເນີນກິດຈະການ (ໂຮງງານທີ່ສະເໜີໃຫ້ຢຸດເຊົາ) ແຕ່ຍັງດຳເນີນກິດຈະການຢູ່ ໃຫ້ປະຕິບັດມາດຕະການຢ່າງເຂັ້ມງວດ.

3. ໃຫ້ສົ່ງສຳເນົາເອກະສານທັງໝົດ ທີ່ກ່ຽວຂ້ອງກັບການອອກໃບອະນຸຍາດດຳເນີນກິດຈະການໂຮງງານ ຈຳນວນ 1 ຊຸດ ມາຍັງກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຕິດຕາມ ແລະ ກວດກາຄືນ (ພາຍຫຼັງທີ່ໄດ້ອອກໃບອະນຸຍາດແລ້ວ).

4. ພິຈາລະນາ ແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຕາມມາດຕາ 45, 46 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ໂດຍອີງໃສ່ເງື່ອນໄຂ ແລະ ສະພາບຄວາມເປັນຈິງ ຂອງແຕ່ລະເມືອງ.

5. ແຈ້ງການສະບັບນີ້ ນຳໃຊ້ສະເພາະແຕ່ໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ໃຫ້ຈັດຕັ້ງປະຕິບັດຈົນກວ່າຈະມີແຈ້ງການສະບັບໃໝ່ປ່ຽນແທນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດດ້ວຍ.

**ຫົວໜ້າກົມອຸດສາຫະກຳ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມອຸດສາຫະກຳ

ທອງ ພົມມະສັກ

- <u>ບ່ອນສົ່ງ</u>:

- ທ່ານລັດຖະມົນຕີວ່າການກະຊວງອ.ຄ (ເພື່ອໃຊ້ຕາງລາຍງານ).
- ຫ້ອງວ່າການແຂວງ, ນະຄອນຫຼວງວຽງຈັນ, (ເພື່ອໃຊ້ຕາງລາຍງານ).
- ຫົວໜ້າຫ້ອງການກະຊວງ ອ.ຄ (ເພື່ອໃຊ້ຕາງລາຍງານ).
- ສຳເນົາກົມ.